# ລາວ-ຈີນສືບຕໍ່ຮ່ວມມືດ້ານການທະນາຄານຢ່າງໜັກແໜ້ນ



ໃນຕອນບ່າຍຂອງວັນທີ 1 ພະຈິກ ຜ່ານມາທີ່ ຫ້ອງຮັບແຂກທະນາຄານແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ ທ່ານ ສົມພາວ ໄຟສິດ ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ພົບປະ ແລະ ປຶກສາຫາລືວຽກງານກັບຄະນະຜູ້ແທນທະນາຄານພັດທະນາແຫ່ງຊາດ ສປ ຈີນ ເຊິ່ງນໍາໂດຍທ່ານ ຈົງຊູຈຸ່ນ (Zhong Shujun) ຮອງຜູ້ອຳນວຍການທະນາຄານພັດທະນາແຫ່ງຊາດ ສປ ຈີນ (CDB) ສາຂາແຂວງຢູນນານ, ຫົວໜ້າໜ່ວຍງານປະຈຳລາວ.

ໃນໂອກາດດຽວກັນນີ້ ທ່ານ ຈົງຊູຈຸ່ນ ກໍໄດ້ແຈ້ງສະພາບການເຂົ້າພົບປະກັບເຈົ້າໜ້າທີ່ລະດັບສູງຂອງລັດຖະບານແຫ່ງ ສປປ ລາວ ກ່ຽວກັບວົງເງິນກູ້ທີ່ລັດຖະບານແຫ່ງ ສປ ຈີນ ຈະໃຫ້ລັດຖະບານລາວ ຈຳນວນຫຼາຍ ເພື່ອເປັນການປະກອບສ່ວນທາງດ້ານທຶນຮອນໃຫ້ແກ່ລັດຖະບານລາວເຮັດໃຫ້ສາມາດບັນລຸເປົ້າໝາຍການເຕີບໂຕທາງດ້ານເສດຖະກິດ, ເປົ້າໝາຍການພັດທະນາຊຸມຊົນ ແລະ ເປົ້າໝາຍການຫຼຸດພົ້ນອອກຈາກຄວາມທຸກຍາກ ໂດຍສະເພາະທາງຝ່າຍທະນາຄານພັດທະນາແຫ່ງຊາດຈີນ ມີເປົ້າໝາຍເພັ່ງເລັ່ງໄປຍັງໂຄງ

ການທີ່ສາມາດສ້າງລາຍຮັບດ້ານພາສີອາກອນ ແລະ ສ້າງເງິນຕາຕ່າງປະເທດໃຫ້ແກ່ຄັງເງິນແຫ່ງຊາດ ເປັນໂຄງການທີ່ສາມາດສ້າງລາຍຮັບ ແລະ ຊໍາລະໜີ້ສິນພາຍໃນຕົວມັນເອງ 100% ເຊັ່ນໂຄງການພະລັງງານໄຟຟ້າ, ໂຄງການສາຍສົ່ງໄຟຟ້າອື່ນໆ ນອກນີ້ກໍມີໂຄງການກໍ່ສ້າງພື້ນຖານໂຄງລ່າງເສດຖະກິດຕ່າງໆ.

ພ້ອມດຽວກັນນັ້ນເຈົ້າໜ້າທີ່ຂັ້ນສູງຄົນດັ່ງກ່າວ ກໍໄດ້ແຈ້ງເຖິງເງິນກູ້ 50 ລ້ານໂດລາສະຫະຣັດ ຈະໃຫ້ທະນາຄານພັດທະນາລາວ ແລະ ຍັງໄດ້ປຶກສາຫາລືກ່ຽວກັບໂຄງການຊ່ວຍເຫຼືອໃນລະບົບຊໍາລະສະສາງໃຫ້ແກ່ທະນາຄານແຫ່ງ ສປປ ລາວ.

ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ກໍໄດ້ກ່າວສະແດງຄວາມເພິ່ງພໍໃຈຕໍ່ການພົວພັນ-ຮ່ວມມືລະຫວ່າງສອງພັກ-ສອງລັດ ແລະ ປະຊາຊົນສອງຊາດລາວ ແລະ ຈີນ ໂດຍສະເພາະໃນຂົງເຂດທະນາຄານກໍໄດ້ມີການພົວພັນ ແລະ ຮ່ວມມືດ້ວຍບາດກ້າວຂະຫຍາຍຕົວຍິ່ງໆຂຶ້ນ ທັງນີ້ກໍເພື່ອຜົນປະໂຫຍດລວມຂອງປະຊາຊົນສອງຊາດບົນແນວທາງຂອງພັກ ແລະ ລັດຖະບານຂອງ ສປປ ລາວ ແລະ ສປ ຈີນ.